ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສໍານັກງານນາຍົກລັດຖະມົນຕີ ເລກທີ 70 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 01.07.2008

# ຂໍ້ຕົກລົງ
# ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ
# ວ່າດ້ວຍການຄຸ້ມຄອງກິດຈະການຫວຍ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມໜັງສືສະເໜີ ສະບັບເລກທີ 1028/ກງ, ລົງວັນທີ 30/04/2008 ຂອງກະຊວງການເງິນ.

ເພື່ອເຮັດໃຫ້ການຄຸ້ມຄອງກິດຈະການຫວຍແທດເໝາະກັບສະພາບເສດຖະກິດ-ສັງຄົມ ແລະ ການບໍລິຫານລັດໃນປະຈຸບັນ, ພ້ອມກັນນັ້ນ ກໍ່ເພື່ອລະດົມທຶນຈາກສັງຄົມ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ໂດຍສະເພາະແມ່ນການແກ້ໄຂຄວາມທຸກຍາກ-ຊ່ວຍເຫຼືອຜູ້ດ້ອຍໂອກາດ ແລະ ສົ່ງເສີມພັດທະນາກອນດີເດັ່ນ;

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕົກລົງ:

ມາດຕາ 1: ການສ້າງຕັ້ງກິດຈະການຫວຍ ມີຈຸດປະສົງເພື່ອລະດົມທຶນຈາກສັງຄົມເຂົ້າໃນການພັດທະນາປະເທດຊາດດ້ວຍການສ້າງບັນຍາກາດໃຫ້ປະຊາຊົນໄດ້ສ່ຽງໂຊກ-ຊີງລາງວັນ ແລະ ອີກດ້ານໜຶ່ງກໍ່ເພື່ອຈໍາກັດການພະນັນຕ່າງໆທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

ມາດຕາ 2: ຜູ້ທີ່ໄດ້ຮັບສິດດໍາເນີນກິດຈະການຫວຍຕ້ອງໃຫ້ບູລິມະສິດແກ່ນັກຮົບເກົ່າ, ພະນັກງານບໍານານ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດໃນການຮັບຜະລິດຕະພັນຫວຍໄປຈໍາໜ່າຍ ຖ້າຫາກເຂົາເຈົ້າມີຄວາມປະສົງ, ມີເງື່ອນໄຂ ແລະ ມີຄວາມສາມາດຈໍາໜ່າຍໄດ້ຕາມລະບຽບການທີ່ວາງໄວ້ກ່ຽວກັບການຄຸ້ມຄອງກິດຈະການຫວຍ.

ມາດຕາ 3: ໃຫ້ກະຊວງການເງິນ ເປັນຜູ້ຄຸ້ມຄອງກິດຈະການຫວຍ ແລະ ກິດຈະການທີ່ຄ້າຍຄືຫວຍທຸກປະເພດ ດ້ວຍການອະນຸຍາດໃຫ້ຈັດພິມ; ຈໍາໜ່າຍໃບຫວຍທຸກປະເພດ; ກໍານົດຊະນິດໃບຫວຍ; ລາງວັນຫວຍ; ອັດຕາເປີເຊັນການຂາຍໃບຫວຍ ແລະ ແຕ່ງຕັ້ງຄະນະກໍາມະການຄຸ້ມຄອງການອອກຫວຍ.

<u>ມາດຕາ 4</u>: ນອກຈາກກະຊວງການເງິນ ບໍ່ໃຫ້ການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນ ມີສິດພິມ, ຈຳໜ່າຍ, ດຳເນີນການອອກເລກລາງວັນຫວຍ ແລະ ກິດຈະການຕ່າງໆທີ່ຄ້າຍຄືຫວຍ.

<u>ມາດຕາ 5</u>: ໃຫ້ກະຊວງການເງິນ ອອກບົດແນະນຳລະອຽດ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

<u>ມາດຕາ 6</u>: ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

<u>ມາດຕາ 7</u>: ຂໍ້ຕົກລົງສະບັບນີ້ ປ່ຽນແທນມະຕິຕົກລົງ ຂອງສະພາລັດຖະມົນຕີ ສະບັບເລກທີ 347/ປສລ, ລົງວັນທີ 14/12/1982 ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ